ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການແລະຂົນສົ່ງ
ກົມເຄຫາແລະຜັງເມືອງ

# ບົດສະເໜີ
## ກ່ຽວກັບການປະເມີນຜົນເບື້ອງຕົ້ນກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການຄຸ້ມຄອງການປຸກສ້າງຕໍ່ກອງປະຊຸມຍທຂປະຈໍາປີ 2014

## I. ພາກສະເໜີລວມກ່ຽວກັບການຈັດຕັ້ງປະຕິບັດ

ໂດຍປະຕິບັດຕາມຄໍາແນະນໍາຂອງ ລັດຖະບານກ່ຽວກັບການປະຕິບັດນະໂຍບາຍສາມສ້າງ ຢູ່ໃນ ໜ້າວຽກຄຸ້ມຄອງການປຸກສ້າງ ເລີ່ມຕັ້ງແຕ່ປີ 2012 ກົມເຄຫາແລະຜັງເມືອງ ໄດ້ດໍາເນີນການທົບທວນແລະປະເມີນຜົນ ການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງການປຸກສ້າງຢູ່ຕາມຕົວເມືອງຕ່າງໆ ຊຶ່ງໃນເວລານັ້ນແມ່ນໄດ້ອີງໃສ່ຂໍ້ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ ສະບັບເລກທີ 7681/ຄຂປກ, ລົງວັນທີ 29 ມິຖຸນາ 2005. ການຄົ້ນຄວ້າປັບປຸງຂໍ້ຕົກລົງສະບັບນີ້ ໄດ້ດໍາເນີນການດ້ວຍການ ປຶກສາຫາລືກັບພະແນກຍທຂແຂວງ, ຫ້ອງການຍທຂເມືອງ ທີ່ເຮັດໜ້າທີ່ ພິຈາລະນາອອກໃບອະນຸຍາດປຸກສ້າງ ແລະ ຂໍຄໍາເຫັນຈາກຄະນະນໍາກະຊວງ ເປັນແຕ່ລະຂັ້ນຕອນຕະຫລອດມາ ຈົນເຖິງການສ້າງ ຮ່າງລະບຽບການ ສະບັບ ສຸດທ້າຍໃນປີ 2013 ທີ່ເຊັນຮັບຮອງໂດຍ ຫົວໜ້າກົມເຄຫາແລະຜັງເມືອງ ໃນວັນທີ 11ພະຈິກ 2013 ແລະມີຂໍ້ຕົກລົງປະກາດໃຊ້ ຂອງລັດຖະມົນຕີວ່າການກະຊວງໂຍທາທິການແລະຂົນສົ່ງ ສະບັບເລກທີ 15897/ຍທຂ, ລົງວັນທີ 11 ພະຈິກ 2013 ເພື່ອນໍາໃຊ້ ຢູ່51ເມືອງທົດລອງສາມສ້າງ ຂອງ ສປປລາວ.

ຫລັງຈາກນັ້ນມາກົມເຄຫາແລະຜັງເມືອງໄດ້ຈັດພິມລະບຽບການສະບັບນີ້ ເປັນຈໍານວນ 100 ສະບັບເພື່ອແຈກຢາຍໃຫ້ແກ່ເມືອງເປົ້າໝາຍ. ພ້ອມກັນນັ້ນ ກໍຍັງໄດ້ນໍາສະເໜີເຜີຍແຜ່ ແລະ ຈັດຝຶກອົບຮົມໃນກອງປະຊຸມທີ່ກ່ຽວຂ້ອງຕ່າງໆຢູ່ໃນແຕ່ລະພາກຂອງສປປລາວ ແລະ ພິເສດແມ່ນໄດ້ເອົາໃຈໃສ່ ແນະນໍາການຈັດຕັ້ງປະຕິບັດ ຢູ່ນະຄອນຫລວງວຽງຈັນ ແລະ ຕົວເມືອງໃຫຍ່ຈໍານວນໜຶ່ງ. ແຕ່ເຖິງແນວໃດ ກໍຕາມເນື່ອງຈາກໄດ້ມີການກໍານົດໄວ້ ແຕ່ເບື້ອງຕົ້ນວ່າ ການຈັດຕັ້ງປະຕິບັດລະບຽບນີ້ ຍັງຢູ່ໃນຂັ້ນທົດລອງ ເທົ່ານັ້ນ ແລະ ຍັງຕ້ອງໄດ້ມີການປະເມີນຜົນເພື່ອຕີລາຄາຊອກຫາຈຸດຄົງຄ້າງຕ່າງໆ ເພື່ອດັດ ແກ້ປັບປຸງໃຫ້ສາມາດນໍາໃຊ້ເອກະພາບກັນໃນທົ່ວປະເທດ ຈົນມາເຖິງປະຈຸບັນນີ້ ຍັງບໍ່ໄດ້ມີການຈັດກອງປະຊຸມ ປະເມີນ

ຜົນແລະສະຫລຸບສຸດທ້າຍຢ່າງເປັນທາງການ ຕາມແຜນການທີ່ວາງໄວ້ເທື່ອ. ສະນັ້ນຈຶ່ງເຫັນວ່າ ການປັບປຸງ ລະບຽບການສະບັບນີ້ ມີຄວາມຈຳເປັນແລະ ກົມອນຢູ່ໃນແຜນທີ່ ຮັບເອົາໄວ້ແລ້ວ.

## II. ໜ້າວຽກຂອງກົມເຄຫາແລະຜັງເມືອງທີ່ກຳນົດໃນລະບຽບການສະບັບນີ້

ໜ້າວຽກຂອງກົມເຄຫາແລະຜັງເມືອງໃນການຄຸ້ມຄອງການປຸກສ້າງໄດ້ລະບຸໄວ້ໃນໝວດທີV ມາດຕາ 16 ຂອງ ລະບຽບການສະບັບນີ້ ຊຶ່ງລວມມີດັ່ງລຸ່ມນີ້:

- ສ້າງແລະປັບປຸງກົດໝາຍ, ຂໍ້ຕົກລົງ, ລະບຽບການ, ບົດແນະນຳ ແລະ ມາດຕາຖານເຕັກນິກຕ່າງໆ ໃນຂົງເຂດວຽກງານການຄຸ້ມຄອງການປຸກສ້າງ;
- ຂົນຂວາຍແຫລ່ງທຶນແລະ ປະສານສົມທົບກັບຜູ້ໃຫ້ທຶນເຂົ້າໃນວຽກງານຄຸ້ມຄອງການປຸກສ້າງ;
- ຈັດຝຶກອົບຮົມ, ສ້າງບົດແນະນຳ ແລະ ປຶ້ມຄູ່ມືໃນການນຳໃຊ້ກົດໝາຍ, ນິຕິກຳຕ່າງໆໃນຂົງເຂດວຽກງານການປຸກສ້າງໃຫ້ພະແນກໂຍທາທິການແລະຂົນສົ່ງແຂວງ, ນະຄອນແລະ ຫ້ອງການໂຍທາທິການແລະຂົນສົ່ງເມືອງ, ເທດສະບານໃນຂອງເຂດທົ່ວປະເທດ;
- ຕິດຕາມກວດກາແລະປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະ ລະບຽບການຕ່າງໆ ໃນຂົງເຂດວຽກງານຄຸ້ມຄອງການປຸກສ້າງ;
- ຄົ້ນຄ້ວາປະກອບຄຳເຫັນ ຕໍ່ບັນດາໂຄງການລົງທຶນຕາມການສະເໜີ ຂອງ ລັດຖະບານ.

## III. ບັນຫາຄົງຄ້າງ:

ເຖິງວ່າໃນໄລຍະຜ່ານມາທຸກຕົວເມືອງຂອງສປປລາວໄດ້ມີການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການປຸກສ້າງພາຍຫລັງໄດ້ມີການຮັບຮອງເອົາແຜນຜັງເມືອງລວມຂອງຕົວເມືອງແລ້ວກໍຕາມການດຳເນີນມາດຕາການຕາມຂໍ້ກຳນົດຂອງລະບຽບການສະບັບນີ້ ເພື່ອໃຫ້ເນື້ອໃນຂອງແຜນຜັງເມືອງປະກົດຜົນເປັນຈິງນັ້ນຍັງເຫັນວ່າມີຂໍ້ຄົງຄ້າງຈຳນວນໜຶ່ງຊຶ່ງໂດຍລວມແລ້ວສາມາດສະຫລຸບໄດ້ດັ່ງນີ້:

1. ໃນລະບຽບການສະບັບເລກທີ15897/ຍທຂ ໄດ້ມີການກຳນົດຕຳແໜ່ງງານ ສະຖາປານິກຜັງເມືອງແຫ່ງລັດເຂົ້າເພີ່ມເຕີມເພື່ອເຮັດໜ້າທີ່ຄຸ້ມຄອງການພັດທະນາຕົວເມືອງ, ການອອກແບບຜັງເມືອງແລະການຈັດຕັ້ງປະຕິບັດຊຶ່ງລວມທັງການອະນຸຍາດປຸກສ້າງ;
2. ຜ່ານການຈັດຕັ້ງປະຕິບັດລະບຽບການສະບັບດັ່ງກ່າວນີ້ ມາໄລຍະໜຶ່ງສັງເກດເຫັນວ່າຍັງບໍ່ທັນມີຄວາມເປັນເອກະພາບດ້ານການເຊັນໃບອະນຸຍາດ ແລະ ຂັ້ນຕອນການພິຈາລະນາ ຢູ່ໃນແຕ່ລະເມືອງຊຶ່ງບາງເມືອງແມ່ນມອບໃຫ້ເຈົ້າເມືອງແລະບາງເມືອງພັດແມ່ນຫົວໜ້າຫ້ອງການຍທຂເມືອງ.
3. ການບັງຄັບໃຊ້ລະບຽບການສະບັບນີ້ ຍັງບໍ່ເຂັ້ມງວດ ແລະ ເອກະພາບກັນໃນທົ່ວສັງຄົມ. ຕາມຕົວເມືອງຕ່າງໆ ຍັງມີຫລາຍກໍລະນີການປຸກສ້າງທີ່ບໍ່ຂໍອະນຸຍາດພ້ອມນັ້ນກໍມີກໍລະນີໄດ້ຮັບການອະນຸຍາດແຕ່ການປຸກສ້າງພັດບໍ່ສອດຄ່ອງຕາມລະບຽບການທີ່ກຳນົດໄວ້ ໃນແຜນຜັງເມືອງແລະກົງກັນຂ້າມ;

4. ການຈັດຕັ້ງປະຕິບັດລະບຽບການສະບັບໃໝ່ ທີ່ມີຂໍ້ຕົກລົງປະກາດໃຊ້ສະບັບເລກທີ15897/ຍທຂ ໃນຄວາມເປັນຈິງແລ້ວໄດ້ເຮັດໃຫ້ມາດຖານການພິຈາລະນາການປຸກສ້າງ ຢູ່51ເມືອງທົດລອງສາມສ້າງ ແລະ ເມືອງອື່ນໆບໍ່ເອກະພາບກັນ.

## IV. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

ບັນຫາຂໍ້ຄົງຄ້າງທີ່ກ່າວມາຂ້າງເທິງນີ້ ເຫັນວ່າອາດມີສາເຫດມາຈາກຂໍ້ຈຳກັດຂອງມາດຕາການທີ່ກຳນົດໄວ້ ດັ່ງນີ້:

1. ໃນສະພາບຄວາມເປັນຈິງແລ້ວພວກເຮົາຍັງບໍ່ສາມາດກຳນົດເອົາຕຳແໜ່ງສະຖາປານິກຜັງເມືອງແຫ່ງຊາດຕາມທີ່ໄດ້ປະຕິບັດຢູ່ປະເທດອື່ນມາແລ້ວເພາະສະນັ້ນໃນເວລາຄົ້ນຄ້ວາປັບປຸງກົດໝາຍວ່າດ້ວຍການຜັງເມືອງກໍໄດ້ມີການສະເໜີໃຫ້ເອົາການສະເໜີນີ້ ອອກຈາກຮ່າງສະບັບປັບປຸງ;
2. ມີຫລາຍເມືອງຂອງສປປລາວທີ່ຍັງມີຈຳນວນການປຸກສ້າງໜ້ອຍແລະພ້ອມກັນນັ້ນສະພາບດ້ານກຳລັງຄວາມສາມາດແລະຈຳນວນບຸກຄະລາກອນ ຂອງທ້ອງຖິ່ນຍັງບໍ່ພຽງພໍແລະການຈັດຕັ້ງປະຕິບັດຂໍ້ກຳນົດຂອງລະບຽບການສະບັບນີ້ ຍັງຕ້ອງໄດ້ມີການໝູນໃຊ້ເພື່ອໃຫ້ສອດຄ່ອງກັບສະພາບທ້ອງຖິ່ນຂອງຕົນ;
3. ການໂຄສະນາເຜີຍແຜ່ຂໍ້ກຳນົດຂອງລະບຽບການສະບັບນີ້ໃຫ້ແກ່ມວນຊົນຍັງບໍ່ທັນກວ້າງຂວາງພຽງພໍ ແລະ ນອກນັ້ນກໍຍັງຂາດການກວດກາການຈັດຕັ້ງປະຕິບັດແລະຂາດການປະຕິບັດມາດຕາການຕໍ່ຜູ້ລະເມີດ;
4. ມວນຊົນສ່ວນຫລາຍໂດຍສະເພາະຜູ້ມີລາຍຮັບຕ່ຳຍັງເຫັນວ່າການອະນຸຍາດປຸກສ້າງ ເພີ່ມລາຍຈ່າຍ, ເວລາແລະຂາດຄວາມໂປ່ງໃສ;
5. ເມືອງທີ່ບໍ່ນອນຢູ່ໃນ ເມືອງທົດລອງສາມສ້າງ ຍັງປະຕິບັດ ຕາມລະບຽບການເກົ່າສະບັບເລກທີ 7681/ຄຂປກ

## V. ຂໍ້ສະເໜີວິທີແກ້ໄຂ

ເພື່ອແກ້ໄຂບັນຫາຕ່າງໆ ທີ່ ເກີດຂຶ້ນຢູ່ໃນປະຈຸບັນ ມີຄວາມຈຳເປັນຕ້ອງໄດ້ມີການປັບປຸງລະບຽບການສະບັບເລກທີ15897/ຍທຂໃຫ້ເປັນຂໍ້ຕົກລົງຂອງລັດຖະມົນຕີວ່າການເພື່ອນຳໃຊ້ຄຸ້ມຄອງການປຸກສ້າງຢູ່ໃນຂອບເຂດທົ່ວປະເທດໂດຍເອົາໃຈໃສ່ບັນຫາຕ່າງໆດັ່ງນີ້:

1. ສະເໜີເອົາຕຳແໜ່ງງານສະຖາປານິກຜັງເມືອງແຫ່ງລັດອອກຈາກລະບຽບການ ແລະ ມອບໜ້າທີ່ທີ່ກຳນົດໄວ້ ໃຫ້ຄະນະກຳມະການຄຸ້ມຄອງການປຸກສ້າງ (ທີ່ກຳນົດໄວ້ໃນກົດໝາຍຜັງເມືອງ)ແທນ;
2. ກຳນົດຂັ້ນຕອນ, ເວລາ, ຈຳນວນເອກະສານປະກອບຂໍການການອະນຸມັດການປຸກສ້າງໃຫ້ຊັດເຈນ ແລະ ລະບຸຂໍ້ກຳນົດສະເພາະທີ່ອະນຸຍາດໃຫ້ເມືອງ ທີ່ມີກຳລັງຄວາມສາມາດບໍ່ພຽບພ້ອມປະຕິບັດໄດ້;

3. ສືບຕໍ່ການເຜີຍແຜ່ລະບຽບການສະບັບນີ້ ພາຍຫລັງມີການປັບປຸງແລະເຊັນຮັບຮອງ; ພ້ອມນັ້ນກໍ່ແຕ່ງຕັ້ງເຈົ້າໜ້າທີ່ໂຍທາແລະກຳນົດພາລະບົດບາດ, ສ້າງເຄື່ອງມືດຳເນີນງານໃຫ້ສາມາດເຮັດໜ້າທີ່ກວດກາການຈັດຕັ້ງປະຕິບັດ
4. ກຳນົດຈຳນວນແລະວິທີການເສັຍຄ່າ ທຳນຽມໃຫ້ຊັດເຈນ ແລະ ກຳນົດອົງກອນຮັບຄຳຮ້ອງຮຽນ ກ່ຽວກັບຄວາມບໍ່ຍຸຕິທຳ ແລະ ປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນຂົງເຂດນີ້ ພ້ອມທັງປະຕິບັດນະໂຍບາຍບໍລິການປະຊາຊົນໃນກໍລະນີທີ່ເຫັນວ່າຈຳເປັນ;
5. ດັດແກ້ລະບຽບການ ເລກທີ15897 ເພື່ອໃຫ້ສາມາດນຳໃຊ້ໄດ້ໃນທົ່ວປະເທດ ແລະ ປະກາດລົບລ້າງເລກທີ 7681/ຄຂປກ.

## VI. ມາດຕາການໃນການຈັດຕັ້ງປະຕິບັດ

ມາດຕາການຕ່າງໆ ທີ່ເຫັນວ່າສົມຄວນຈັດຕັ້ງປະຕິບັດເພື່ອປັບປຸງລະບຽບການສະນີ້ອາດລວມມີ:

1. ຈັດກອງປະຊຸມປະເມີນຜົນໂດຍມີການສົມທົບຂອງພາກສ່ວນກ່ຽວຂ້ອງເພື່ອຄົ້ນຄວ້າປັບປຸງ ແລະ ນຳສະເໜີລັດຖະມົນຕີວ່າການເຊັນຮັບຮອງແລະ ເຜີຍແຜ່ແນະນຳການຈັດຕັ້ງປະຕິບັດ
2. ປັບປຸງຄືນເນື້ອໃນຂອງຂໍ້ກຳນົດສະບັບນີ້ ອີງຕາມຜົນຂອງການປະເມີນຜົນໂດຍສະເພາະແມ່ນເພີ່ມຂໍ້ກຳນົດທີ່ໃຫ້ຄວາມກະຈ່າງແຈ້ງ ແລະ ຄວາມຊັດເຈນເພື່ອແກ້ໄຂບັນຫາຕ່າງໆ ທີ່ກ່າວຂ້າງເທິງໂດຍສະເພາະແມ່ນການເອົາຕຳແໜ່ງ ສະຖາປານິກແຫ່ງລັດອອກ ແລະ ມອບໜ້າທີ່ໃຫ້ຄະນະກຳມະການຄຸ້ມຄອງ ການປຸກສ້າງເຮັດແທນ; ລົບລ້າງຂໍ້ກຳນົດເລກທີ 7681/ຄຂປກແລະສ້າງຂໍ້ກຳນົດສະບັບປັບປຸງປ່ຽນແທນແລະນຳໃຊ້ເອກະພາບກັນໃນທົ່ວປະເທດ.
3. ພິຈາລະນາສ້າງນະໂຍບາຍແລະມາດຕາການເພີ່ມເຕີມເພື່ອຊ່ວຍແກ້ໄຂບັນຫາໃນໄລຍະຍາວ.

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການແລະຂົນສົ່ງ

ກົມເຄຫາແລະຜັງເມືອງ

# ບົດສະເໜີ
# ກ່ຽວກັບການປະເມີນຜົນເບື້ອງຕົ້ນກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການຄຸ້ມຄອງການປຸກສ້າງຕໍ່ກອງປະຊຸມຍທຂປະຈຳປີ 2014

## I. ພາກສະເໜີລວມກ່ຽວກັບການຈັດຕັ້ງປະຕິບັດ

ໂດຍປະຕິບັດຕາມຄຳແນະນຳຂອງ ລັດຖະບານກ່ຽວກັບການປະຕິບັດນະໂຍບາຍສາມສ້າງ ຢູ່ໃນ ໜ້າວຽກຄຸ້ມຄອງການປຸກສ້າງ ເລີ່ມຕັ້ງແຕ່ປີ 2012 ກົມເຄຫາແລະຜັງເມືອງ ໄດ້ດຳເນີນການທົບທວນແລະປະເມີນຜົນ ການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງການປຸກສ້າງຢູ່ຕາມຕົວເມືອງຕ່າງໆ ຊຶ່ງໃນເວລານັ້ນແມ່ນໄດ້ອີງໃສ່ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ ສະບັບເລກທີ 7681/ຄຂປກ, ລົງວັນທີ 29 ມິຖຸນາ 2005. ການຄົ້ນຄວ້າປັບປຸງຂໍ້ຕົກລົງສະບັບນີ້ ໄດ້ດຳເນີນການດ້ວຍການ ປຶກສາຫາລືກັບພະແນກຍທຂແຂວງ, ຫ້ອງການຍທຂເມືອງ ທີ່ເຮັດໜ້າທີ່ ພິຈາລະນາອອກໃບອະນຸຍາດປຸກສ້າງ ແລະ ຂໍຄຳເຫັນຈາກຄະນະນຳກະຊວງ ເປັນແຕ່ລະຂັ້ນຕອນຕະຫລອດມາ ຈົນເຖິງການສ້າງ ຮ່າງລະບຽບການ ສະບັບ ສຸດທ້າຍໃນປີ 2013 ທີ່ເຊັນຮັບຮອງໂດຍ ຫົວໜ້າກົມເຄຫາແລະຜັງເມືອງ ໃນວັນທີ 11ພະຈິກ 2013 ແລະມີຂໍ້ຕົກລົງປະກາດໃຊ້ ຂອງລັດຖະມົນຕີວ່າການກະຊວງໂຍທາທິການແລະຂົນສົ່ງ ສະບັບເລກທີ 15897/ຍທຂ, ລົງວັນທີ 11 ພະຈິກ 2013 ເພື່ອນຳໃຊ້ ຢູ່51ເມືອງທົດລອງສາມສ້າງ ຂອງ ສປປລາວ.

ຫລັງຈາກນັ້ນມາກົມເຄຫາແລະຜັງເມືອງໄດ້ຈັດພິມລະບຽບການສະບັບນີ້ ເປັນຈຳນວນ 100 ສະບັບເພື່ອແຈກຢາຍໃຫ້ແກ່ເມືອງເປົ້າໝາຍ. ພ້ອມກັນນັ້ນ ກໍຍັງໄດ້ນຳສະເໜີເຜີຍແຜ່ ແລະ ຈັດຝຶກອົບຮົມໃນກອງປະຊຸມທີ່ກ່ຽວຂ້ອງຕ່າງໆຢູ່ໃນແຕ່ລະພາກຂອງສປປລາວ ແລະ ພິເສດແມ່ນໄດ້ເອົາໃຈໃສ່ ແນະນຳການຈັດຕັ້ງປະຕິບັດ ຢູ່ນະຄອນຫລວງວຽງຈັນ ແລະ ຕົວເມືອງໃຫຍ່ຈຳນວນໜຶ່ງ. ແຕ່ເຖິງແນວໃດ ກໍຕາມເນື່ອງຈາກໄດ້ມີການກຳນົດໄວ້ ແຕ່ເບື້ອງຕົ້ນວ່າ ການຈັດຕັ້ງປະຕິບັດລະບຽບນີ້ ຍັງຢູ່ໃນຂັ້ນທົດລອງ ເທົ່ານັ້ນ ແລະ ຍັງຕ້ອງໄດ້ມີການປະເມີນຜົນເພື່ອຕີລາຄາຊອກຫາຈຸດຄົງຄ້າງຕ່າງໆ ເພື່ອດັດ ແກ້ປັບປຸງໃຫ້ສາມາດນຳໃຊ້ເອກະພາບກັນໃນທົ່ວປະເທດ ຈົນມາເຖິງປະຈຸບັນນີ້ ຍັງບໍ່ໄດ້ມີການຈັດກອງປະຊຸມ ປະເມີນ

ຜົນແລະສະຫລຸບສຸດທ້າຍຢ່າງເປັນທາງການ ຕາມແຜນການທີ່ວາງໄວ້ເທື່ອ. ສະນັ້ນຈຶ່ງເຫັນວ່າ ການປັບປຸງ ລະບຽບການສະບັບນີ້ ມີຄວາມຈຳເປັນແລະ ກົນອນຢູ່ໃນແຜນທີ່ ຮັບເອົາໄວ້ແລ້ວ.

## II. ໜ້າວຽກຂອງກົມເຄຫາແລະຜັງເມືອງທີ່ກຳນົດໃນລະບຽບການສະບັບນີ້

ໜ້າວຽກຂອງກົມເຄຫາແລະຜັງເມືອງໃນການຄຸ້ມຄອງການປຸກສ້າງໄດ້ລະບຸໄວ້ໃນໝວດທີV ມາດຕາ 16 ຂອງ ລະບຽບການສະບັບນີ້ ຊຶ່ງລວມມີດັ່ງລຸ່ມນີ້:

- ສ້າງແລະປັບປຸງກົດໝາຍ, ຂໍ້ຕົກລົງ, ລະບຽບການ, ບົດແນະນຳ ແລະ ມາດຕາຖານເຕັກນິກຕ່າງໆ ໃນຂົງເຂດວຽກງານການຄຸ້ມຄອງການປຸກສ້າງ;
- ຂົນຂວາຍແຫລ່ງທຶນແລະ ປະສານສົມທົບກັບຜູ້ໃຫ້ທຶນເຂົ້າໃນວຽກງານຄຸ້ມຄອງການປຸກສ້າງ;
- ຈັດຝຶກອົບຮົມ, ສ້າງບົດແນະນຳ ແລະ ປື້ມຄູ່ມືໃນການນຳໃຊ້ກົດໝາຍ, ນິຕິກຳຕ່າງໆໃນຂົງເຂດວຽກງານການປຸກສ້າງໃຫ້ພະແນກໂຍທາທິການແລະຂົນສົ່ງແຂວງ, ນະຄອນແລະ ຫ້ອງການໂຍທາທິການແລະຂົນສົ່ງເມືອງ, ເທດສະບານໃນຂອງເຂດທົ່ວປະເທດ;
- ຕິດຕາມກວດກາແລະປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະ ລະບຽບການຕ່າງໆ ໃນຂົງເຂດວຽກງານຄຸ້ມຄອງການປຸກສ້າງ;
- ຄົ້ນຄ້ວາປະກອບຄຳເຫັນ ຕໍ່ບັນດາໂຄງການລົງທຶນຕາມການສະເໜີ ຂອງ ລັດຖະບານ.

## III. ບັນຫາຄົງຄ້າງ:

ເຖີງວ່າໃນໄລຍະຜ່ານມາທຸກຕົວເມືອງຂອງສປປລາວໄດ້ມີການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການປຸກສ້າງພາຍຫລັງໄດ້ມີການຮັບຮອງເອົາແຜນຜັງເມືອງລວມຂອງຕົວເມືອງແລ້ວກໍຕາມການດຳເນີນມາດຕາການຕາມຂໍ້ກຳນົດຂອງລະບຽບການສະບັບນີ້ ເພື່ອໃຫ້ເນື້ອໃນຂອງແຜນຜັງເມືອງປະກົດຜົນເປັນຈິງນັ້ນຍັງເຫັນວ່າມີຂໍ້ຄົງຄ້າງຈຳນວນໜຶ່ງຊຶ່ງໂດຍລວມແລ້ວສາມາດສະຫລຸບໄດ້ດັ່ງນີ້:

1. ໃນລະບຽບການສະບັບເລກທີ15897/ຍທຂ ໄດ້ມີການກຳນົດຕຳແໜ່ງງານ ສະຖາປານິກຜັງເມືອງແຫ່ງລັດເຂົ້າເພີ່ມເຕີມເພື່ອເຮັດໜ້າທີ່ຄຸ້ມຄອງການພັດທະນາຕົວເມືອງ, ການອອກແບບຜັງເມືອງແລະການຈັດຕັ້ງປະຕິບັດຊຶ່ງລວມທັງການອະນຸຍາດປຸກສ້າງ;
2. ຜ່ານການຈັດຕັ້ງປະຕິບັດລະບຽບການສະບັບດັ່ງກ່າວນີ້ ມາໄລຍະໜຶ່ງສັງເກດເຫັນວ່າຍັງບໍ່ທັນມີຄວາມເປັນເອກະພາບດ້ານການເຊັນໃບອະນຸຍາດ ແລະ ຂັ້ນຕອນການພິຈາລະນາ ຢູ່ໃນແຕ່ລະເມືອງຊຶ່ງບາງເມືອງແມ່ນມອບໃຫ້ເຈົ້າເມືອງແລະບາງເມືອງພັດແມ່ນຫົວໜ້າຫ້ອງການຍທຂເມືອງ.
3. ການບັງຄັບໃຊ້ລະບຽບການສະບັບນີ້ ຍັງບໍ່ເຂັ້ມງວດ ແລະ ເອກະພາບກັນໃນທົ່ວສັງຄົມ. ຕາມຕົວເມືອງຕ່າງໆ ຍັງມີຫລາຍກໍລະນີການປຸກສ້າງທີ່ບໍ່ຂໍອະນຸຍາດພ້ອມນັ້ນກໍມີກໍລະນີໄດ້ຮັບການອະນຸຍາດແຕ່ການປຸກສ້າງພັດບໍ່ສອດຄ່ອງຕາມລະບຽບການທີ່ກຳນົດໄວ້ ໃນແຜນຜັງເມືອງແລະກົງກັນຂ້າມ;

4. ການຈັດຕັ້ງປະຕິບັດລະບຽບການສະບັບໃໝ່ ທີ່ມີຂໍ້ຕົກລົງປະກາດໃຊ້ສະບັບເລກທີ15897/ຍທຂ ໃນຄວາມເປັນຈິງແລ້ວໄດ້ເຮັດໃຫ້ມາດຖານການພິຈາລະນາການປຸກສ້າງ ຢູ່51ເມືອງທົດລອງສາມສ້າງ ແລະ ເມືອງອື່ນໆບໍ່ເອກະພາບກັນ.

## IV. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

ບັນຫາຂໍ້ຄົງຄ້າງທີ່ກ່າວມາຂ້າງເທິງນີ້ ເຫັນວ່າອາດມີສາເຫດມາຈາກຂໍ້ຈຳກັດຂອງມາດຕາການທີ່ກຳນົດໄວ້ ດັ່ງນີ້:

1. ໃນສະພາບຄວາມເປັນຈິງແລ້ວພວກເຮົາຍັງບໍ່ສາມາດກຳນົດເອົາຕຳແໜ່ງສະຖາປານິກຜັງເມືອງແຫ່ງຊາດຕາມທີ່ໄດ້ປະຕິບັດຢູ່ປະເທດອື່ນມາແລ້ວເພາະສະນັ້ນໃນເວລາຄົ້ນຄ້ວາປັບປຸງກົດໝາຍວ່າດ້ວຍການຜັງເມືອງກໍໄດ້ມີການສະເໜີໃຫ້ເອົາການສະເໜີນີ້ ອອກຈາກຮ່າງສະບັບປັບປຸງ;
2. ມີຫລາຍເມືອງຂອງສປປລາວທີ່ຍັງມີຈຳນວນການປຸກສ້າງໜ້ອຍແລະພ້ອມກັນນັ້ນສະພາບດ້ານກຳລັງຄວາມສາມາດແລະຈຳນວນບຸກຄະລາກອນ ຂອງທ້ອງຖິ່ນຍັງບໍ່ພຽງພໍແລະການຈັດຕັ້ງປະຕິບັດຂໍ້ກຳນົດຂອງລະບຽບການສະບັບນີ້ ຍັງຕ້ອງໄດ້ມີການໝູນໃຊ້ເພື່ອໃຫ້ສອດຄ່ອງກັບສະພາບທ້ອງຖິ່ນຂອງຕົນ;
3. ການໂຄສະນາເຜີຍແຜ່ຂໍ້ກຳນົດຂອງລະບຽບການສະບັບນີ້ໃຫ້ແກ່ມວນຊົນຍັງບໍ່ທັນກວ້າງຂວາງພຽງພໍ ແລະ ນອກນັ້ນກໍຍັງຂາດການກວດກາການຈັດຕັ້ງປະຕິບັດແລະຂາດການປະຕິບັດມາດຕາການຕໍ່ຜູ້ລະເມີດ;
4. ມວນຊົນສ່ວນຫລາຍໂດຍສະເພາະຜູ້ມີລາຍຮັບຕ່ຳຍັງເຫັນວ່າການອະນຸຍາດປຸກສ້າງ ເພີ່ມລາຍຈ່າຍ, ເວລາແລະຂາດຄວາມໂປ່ງໃສ;
5. ເມືອງທີ່ບໍ່ນອນຢູ່ໃນ ເມືອງທົດລອງສາມສ້າງ ຍັງປະຕິບັດ ຕາມລະບຽບການເກົ່າສະບັບເລກທີ 7681/ຄຂປກ

## V. ຂໍ້ສະເໜີວິທີແກ້ໄຂ

ເພື່ອແກ້ໄຂບັນຫາຕ່າງໆ ທີ່ ເກີດຂຶ້ນຢູ່ໃນປະຈຸບັນ ມີຄວາມຈຳເປັນຕ້ອງໄດ້ມີການປັບປຸງລະບຽບການສະບັບເລກທີ15897/ຍທຂໃຫ້ເປັນຂໍ້ຕົກລົງຂອງລັດຖະມົນຕີວ່າການເພື່ອນຳໃຊ້ຄຸ້ມຄອງການປຸກສ້າງຢູ່ໃນຂອບເຂດທົ່ວປະເທດໂດຍເອົາໃຈໃສ່ບັນຫາຕ່າງໆດັ່ງນີ້:

1. ສະເໜີເອົາຕຳແໜ່ງງານສະຖາປານິກຜັງເມືອງແຫ່ງລັດອອກຈາກລະບຽບການ ແລະ ມອບໜ້າທີ່ທີ່ກຳນົດໄວ້ ໃຫ້ຄະນະກຳມະການຄຸ້ມຄອງການປຸກສ້າງ (ທີ່ກຳນົດໄວ້ໃນກົດໝາຍຜັງເມືອງ)ແທນ;
2. ກຳນົດຂັ້ນຕອນ, ເວລາ, ຈຳນວນເອກະສານປະກອບຂໍການການອະນຸມັດການປຸກສ້າງໃຫ້ຊັດເຈນ ແລະ ລະບຸຂໍ້ກຳນົດສະເພາະທີ່ອະນຸຍາດໃຫ້ເມືອງ ທີ່ມີກຳລັງຄວາມສາມາດບໍ່ພຽບພ້ອມປະຕິບັດໄດ້;

3. ສືບຕໍ່ການເຜີຍແຜ່ລະບຽບການສະບັບນີ້ ພາຍຫລັງມີການປັບປຸງແລະເຊັນຮັບຮອງ; ພ້ອມນັ້ນກໍ່ແຕ່ງຕັ້ງເຈົ້າໜ້າທີ່ໂຍທາແລະກຳນົດພາລະບົດບາດ, ສ້າງເຄື່ອງມືດຳເນີນງານໃຫ້ສາມາດເຮັດໜ້າທີ່ກວດກາການຈັດຕັ້ງປະຕິບັດ
4. ກຳນົດຈຳນວນແລະວິທີການເສັຍຄ່າ ທຳນຽມໃຫ້ຊັດເຈນ ແລະ ກຳນົດອົງກອນຮັບຄຳຮ້ອງຮຽນ ກ່ຽວກັບຄວາມບໍ່ຍຸຕິທຳ ແລະ ປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂື້ນໃນຂົງເຂດນີ້ ພ້ອມທັງປະຕິບັດນະໂຍບາຍບໍລິການປະຊາຊົນໃນກໍລະນີທີ່ເຫັນວ່າຈຳເປັນ;
5. ດັດແກ້ລະບຽບການ ເລກທີ15897 ເພື່ອໃຫ້ສາມາດນຳໃຊ້ໄດ້ໃນທົ່ວປະເທດ ແລະ ປະກາດລົບລ້າງເລກທີ 7681/ຄຂປກ.

## VI. ມາດຕາການໃນການຈັດຕັ້ງປະຕິບັດ

ມາດຕາການຕ່າງໆ ທີ່ເຫັນວ່າສົມຄວນຈັດຕັ້ງປະຕິບັດເພື່ອປັບປຸງລະບຽບການສະນີ້ອາດລວມມີ:

1. ຈັດກອງປະຊຸມປະເມີນຜົນໂດຍມີການສົມທົບຂອງພາກສ່ວນກ່ຽວຂ້ອງເພື່ອຄົ້ນຄວ້າປັບປຸງ ແລະ ນຳສະເໜີລັດຖະມົນຕີວ່າການເຊັນຮັບຮອງແລະ ເຜີຍແຜ່ແນະນຳການຈັດຕັ້ງປະຕິບັດ
2. ປັບປຸງຄືນເນື້ອໃນຂອງຂໍ້ກຳນົດສະບັບນີ້ ອີງຕາມຜົນຂອງການປະເມີນຜົນໂດຍສະເພາະແມ່ນເພີ່ມຂໍ້ກຳນົດທີ່ໃຫ້ຄວາມກະຈ່າງແຈ້ງ ແລະ ຄວາມຊັດເຈນເພື່ອແກ້ໄຂບັນຫາຕ່າງໆ ທີ່ກ່າວຂ້າງເທິງໂດຍສະເພາະແມ່ນການເອົາຕຳແໜ່ງ ສະຖາປານິກແຫ່ງລັດອອກ ແລະ ມອບໜ້າທີ່ໃຫ້ຄະນະກຳມະການຄຸ້ມຄອງ ການປຸກສ້າງເຮັດແທນ; ລົບລ້າງຂໍ້ກຳນົດເລກທີ 7681/ຄຂປກແລະສ້າງຂໍ້ກຳນົດສະບັບປັບປຸງປ່ຽນແທນແລະນຳໃຊ້ເອກະພາບກັນໃນທົ່ວປະເທດ.
3. ພິຈາລະນາສ້າງນະໂຍບາຍແລະມາດຕາການເພີ່ມເຕີມເພື່ອຊ່ວຍແກ້ໄຂບັນຫາໃນໄລຍະຍາວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໍໍໍໍໍໍໍໍ

ກະຊວງໂຍທາທິການ ແລະ ຂົນສົ່ງ

(ຮ່າງ) ສັງລວມເນື້ອໃນກອງປະຊຸມ ຍທຂ ທົ່ວປະເທດ ປີ 2014

- ອີງຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າການ ເລກທີ 16141/ຍທຂ, ລົງວັນທີ 04/09/2014 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳລວມ ແລະ ບັນດາອະນຸກຳມະການເພື່ອກະກຽມກອງປະຊຸມ ຍທຂ ທົ່ວປະເທດ ປີ 2014.
- ອີງຕາມບົດລາຍງານຂອງຫ້ອງການກະຊວງ ສະບັບເລກທີ 15642/ຍທຂ.ຫກ, ລົງວັນທີ 29/08/2014 ກ່ຽວກັບບັນດາຫົວຂໍ້ເນື້ອໃນກອງປະຊຸມ ຍທຂ ທົ່ວປະເທດ ປີ 2014.

2.2. (ຂະແໜງເຄຫາ ແລະຜັງເມືອງ) ກົດລະບຽບວ່າດ້ວຍການຄຸ້ມຄອງການປຸກສ້າງ ຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການ ສະບັບເລກທີ 15897/ຍທຂ, ລົງວັນທີ 11/11/2013

| ລດ | ການຈັດຕັ້ງປະຈຸບັນຮອດ ປະຈຸບັນ(ຮອດສົກ 13-14) | ໜ້າວຽກ (ຕາມພາລະບົດບາດກະຊວງ) | ຫົວຂໍ້ບັນຫາ | ສາເຫດບັນຫາ | ວິທີແກ້ໄຂ (ທາງອອກ) | ກົນໄກ (ບັນດານິຕິກຳຕ່າງໆ...) | ມາດຕະການ | ໝາຍເຫດ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|---|---|---|
| 1 | ໄດ້ມີການຄົ້ນຄ້ວາປັບປຸງ ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ ສະບັບເລກທີ 7681/ຄຂປກ ມາເປັນ ເລກທີ 15897/ຍທຂ | 1) ຄົ້ນຄ້ວາ ປັບປຸງ ລະບຽບການ ຕາມຄວາມຈຳເປັນ ແລ້ວ ນຳສະເໜີຂັ້ນເທິງຮັບຮອງ. | 1) ໃນລະບຽບການສະບັບໃໝ່ 15897/ຍທຂ ໄດ້ມີການເພີ່ມຕຳແໜ່ງງານ ສະຖາປານິກຜັງເມືອງແຫ່ງຊາດເຂົ້າເພີ່ມເຕີມ | ໃນຕົວຈິງ ຍັງບໍ່ສາມາດປະຕິບັດໄດ້ ແລະ ໃນຮ່າງກົດໝາຍຜັງເມືອງສະບັບປັບປຸງ ກໍໄດ້ສະເໜີເອົາອອກແລ້ວ. | ສະເໜີເອົາຕຳແໜ່ງງານດັ່ງກ່າວນີ້ ອອກຈາກລະບຽບການ ແລະ ມອບໜ້າທີ່ໃຫ້ຄະນະກຳມະການຄຸ້ມຄອງ ການປຸກສ້າງແທນ | ຂໍ້ຕົກລົງ ຂອງ ລັດຖະມົນວ່າການ | ດັດແກ້ລະບຽບການ ສະບັບນີ້ ໂດຍເອົາຕຳແໜ່ງ ສະຖາປານິກແຫ່ງຊາດອອກ ແລະ ມອບໜ້າທີ່ໃຫ້ຄະນະກຳມະການຄຸ້ມຄອງ ການປຸກສ້າງເຮັດແທນ | | ກົມເຄຫາແລະຜັງເມືອງ |
| 2 | ນຳສະເໜີລັດຖະມົນຕີ ວ່າການກະຊວງໂຍທາທິການ ແລະຂົນສົ່ງ ເຊັນແຈ້ງການປະກາດໃຊ້ | 2) ສ້າງບົດແນະນຳ ເພີ່ມເຕີມ (ຖ້າຈຳເປັນ) ພ້ອມກັບ ຈັດຝຶກອົບຮົມ ເຜີຍແຜ່ໃຫ້ຜູ້ມີສ່ວນກ່ຽວຂ້ອງ. | 2) ຍັງບໍ່ທັນມີຄວາມເປັນເອກະພາບດ້ານ ການເຊັນໃບອະນຸຍາດ ແລະ ຂັ້ນຕອນການພິຈາລະນາ ຢູ່ໃນແຕ່ລະເມືອງ | ສະພາບການປຸກສ້າງ, ກຳລັງຄວາມສາມາດດ້ານບຸກຄະລາກອນ ຂອງທ້ອງຖິ່ນແຕກຕ່າງກັນ ແລະ ຍັງຕ້ອງໄດ້ມີການໝູນໃຊ້ | ກຳນົດຂັ້ນຕອນ, ວິທີການ, ຈຳນວນເອກະສານປະກອບ ໃຫ້ຊັດເຈນ ແລະ ລະບຸຂໍ້ກຳນົດສະ ເພາະທີ່ອະນຸຍາດໃຫ້ເມືອງ ທີ່ມີກຳລັງຄວາມສາມາດບໍ່ພຽບພ້ອມປະຕິບັດໄດ້ | ຂໍ້ຕົກລົງ ຂອງ ລັດຖະມົນວ່າການ | ປັບປຸງເນື້ອໃນຂອງ ລະບຽບການ ເພື່ອໃຫ້ສາມາດແກ້ໄຂບັນຫານີ້ໄດ້ ແລະ ໃຫ້ມີຄວາມເອກະພາບກັນ ທົ່ວປະເທດ | | ກົມເຄຫາແລະຜັງເມືອງ |
| 3 | ພິມເຜີຍແຜ່ ແລະ ຈັດຝຶກອົບຮົມ | 3) ຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິ ບັດ ລະບຽບການສະບັບນີ້. | 3) ການບັງຄັບໃຊ້ຍັງບໍ່ເຂັ້ມງວດ ແລະ ເອກະພາບກັນໃນທົ່ວສັງຄົມ | ການໂຄສະນາເຜີຍແຜ່ບໍ່ກວ້າງ ຂວາງ ແລະ ຂາດການກວດກາການຈັດຕັ້ງປະຕິບັດ | ສືບຕໍ່ການເຜີຍແຜ່ ແລະ ສ້າງຕັ້ງເຈົ້າໜ້າທີ່ໂຍທາພ້ອມກຳນົດພາລະບົດບາດ ແລະ ເຄື່ອງມືດຳເນີນງານໃຫ້ສາມາດເຮັດໜ້າທີ່ກວດກາການຈັດຕັ້ງປະຕິບັດ | ຂໍ້ຕົກລົງ ຂອງ ລັດຖະມົນວ່າການ | ຈັດກອງປະຊຸມປະເມີນຜົນ, ຄົ້ນ ຄວ້າປັບປຸງ ແລະ ນຳສະເໜີລັດຖະມົນຕີວ່າການເຊັນຮັບຮອງ ແລະ ເຜີຍແຜ່ແນະນຳການຈັດຕັ້ງປະຕິບັດ | | ກົມເຄຫາແລະຜັງເມືອງ |
| 4 | ຈັດຕັ້ງປະຕິບັດທົດລອງ ຢູ່ 51 ເມືອງສາມສ້າງ | 4) ປະກອບຄຳເຫັນຕໍ່ໂຄງການລົງ ທຶນຕາມການສະເໜີ ຂອງ ລັດຖະບານ | | ມອບຊົນເຫັນວ່າ ການອະນຸຍາດປຸກສ້າງ ເພີ່ມລາຍຈ່າຍ,ເວລາແລະຂາດຄວາມໂປ່ງໃສ | ພິຈາລະນາໃຫ້ຂັ້ນຕອນການຂໍອະນຸມັດປຸກສ້າງ ກະທັດຫັດ, ຈຳນວນແລະວິທີການເສຍຄ່າ ທຳນຽມໃຫ້ຊັດເຈນ ແລະ ສ້າງອີງກອນຮັບຄຳຮ້ອງທຸກ ກ່ຽວກັບຄວາມບໍ່ຍຸຕິທຳ ແລະ ປະກົດການຫຍໍ້ທໍ້ຕ່າງໆ | ຂໍ້ຕົກລົງ ຂອງ ລັດຖະມົນວ່າການ | ເພີ່ມຂໍ້ກຳນົດທີ່ໃຫ້ຄວາມກະຈ່າງແຈ້ງ ແລະ ຄວາມຊັດເຈນກ່ຽວກັບ ດ້ານນີ້ເຂົ້າໃນລະບຽບການສະບັບປັບປຸງ | | ກົມເຄຫາແລະຜັງເມືອງ |
| 5 | ຍັງບໍ່ທັນໄດ້ມີການສະຫລຸບປະເມີນຜົນ ຢ່າງເປັນທາງການ | 5) ຊອກຫາແຫລ່ງ ເພື່ອສະໜອງໃຫ້ແກ່ວຽກງານ ຄຸ້ມຄອງການປຸກສ້າງ | 4) ລະບຽບການສະບັບໃໝ່ 15897/ຍທຂ ໄດ້ ເຮັດໃຫ້ມາດຖານການພິຈາລະນາການປຸກສ້າງ ຢູ່51ເມືອງທົດລອງສາມສ້າງ ແລະ ເມືອງອື່ນໆ ບໍ່ເອກະພາບກັນ | ເມືອງທີ່ບໍ່ນອນຢູ່ໃນ ເມືອງທົດລອງສາມສ້າງ ຍັງປະຕິບັດ ຕາມລະບຽບການເກົ່າສະບັບເລກທີ 7681/ຄຂປກ | ດັດແກ້ລະບຽບການ ເລກທີ15897 ເພື່ອໃຫ້ສາມາດນຳໃຊ້ໄດ້ໃນທົ່ວປະເທດ ແລະ ປະກາດລົບລ້າງ ເລກທີ 7681/ຄຂປກ | ຂໍ້ຕົກລົງ ຂອງ ລັດຖະມົນວ່າການ | ຈັດກອງປະຊຸມປະເມີນຜົນ, ຄົ້ນ ຄວ້າປັບປຸງ ແລະ ນຳສະເໜີລັດຖະມົນຕີວ່າການເຊັນຮັບຮອງ ແລະ ເຜີຍແຜ່ແນະນຳການຈັດຕັ້ງປະຕິບັດ | | ກົມເຄຫາແລະຜັງເມືອງ |